ກະຊວງສຶກສາ ແລະ ກໍ່ສ້າງ

ມະຫາວິທະຍາໄລ ກຽນຢາງ

ເລກທີ: *120* /TB-ມລ ກຽນຢາງ

ສາທາລະນະລັດ ສັງຄົມນິຍົມຫວຽດນາມ

ເອກະລາດ-ເສລີພາບ-ຄວາມຜາສຸກ

ກຽນຢາງ, ວັນທີ 08 /08/ 2022

# ແຈ້ງການ

ກ່ຽວກັບການເຂົ້າຮຽນ, ສຳລັບນັກສຶກສາຕ່າງປະເທດ

ສົກຮຽນ 2022-2023 ຂອງມະຫາວິທະຍາໄລ ກຽນຢາງ

- ອີງຕາມ ການລົງທະບຽນຮຽນ ປີ2022 ວັນທີ 06/04/ 2022 ຂອງມະຫາວິທະຍາໄລ ກຽນຢາງ;
- ອີງຕາມ ແຈ້ງການເອກະສານລາຍງານເລກທີ 01/BB-ກຽນຢາງ, ລົງວັນທີ 26/04/2022 ຂອງຄະນະກຳມະການມະຫາວິທະຍາໄລກຽນຢາງ ກ່ຽວກັບການເຂົ້າຮຽນ ຄັ້ງທີ 1 ປີ2022.

ມະຫາວິທະຍາໄລ ກຽນຢາງ ແຈ້ງການເປີດຮັບຄຳຮ້ອງສະໝັກທຶນການສຶກສາລະດັບມະຫາວິທະໄລຢ່າງເປັນທາງການ ປີ 2022 ສຳລັບນັກສຶກສາຕ່າງປະເທດ ດັ່ງນີ້:

1. ຈຸດປະສົງ ແລະ ເງື່ອນໄຂ

1.1 ຈຸດປະສົງ

ແມ່ນນັກສຶກສາຜູ້ທີ່ກຳລັງອາໄສຢູ່, ຜູ້ທີ່ກຳລັງຮຽນຢູ່ບັນດາປະເທດ ກຳປູເຈ່ຍ, ລາວ, ອິນໂດເນເຊຍ ຕ້ອງຈົບການສຶກສາລະດັບມັດທະຍົມຕອນປາຍ ຫຼື ທຽບເທົ່າ.

1.2 ເງື່ອນໄຂລວມ

- ນັກສຶກສາຜູ້ທີ່ໄດ້ຮັບການຝຶກອົບຮົມຈະຕ້ອງມີຄຸນສົມບັດຄົບຕາມເງື່ອນໄຂ, ຂໍ້ກຳນົດກົດລະບຽບການລົງທະບຽນຮຽນປັດຈຸບັນຂອງ ສສ ຫວຽດນາມ, ຕາມເອກະສານເລກທີ 30/2018/TT-BGDDT ລົງວັນທີ 21/12/2018 ແລະ ເອກະສານເລກທີ 17/2015/ TT-BGDDT ລົງວັນທີ 01/09/2015 ຂອງລັດຖະມົນຕີກະຊວງສຶກສາ ແລະ ກໍ່ສ້າງຫວຽດນາມ;
- ໄລຍະເວລາສູງສຸດທີ່ນັກຮຽນສາມາດຮັບທຶນການສຶກສາແມ່ນ 5 ປີ ນັບຕັ້ງແຕ່ມື້ອອກຂໍ້ຕົກລົງເຂົ້າຮຽນ, ຖ້າໃຊ້ເວລາຫລາຍກວ່າທີ່ລະບຸໄວ້ຂ້າງເທິງນັ້ນ ຄ່າຮຽນ ແລະ ຄ່າຄອງຊີບທັງໝົດແມ່ນນັກຮຽນຕ້ອງໄດ້ຮັບຜິດຊອບເອງ;
- ນັກສຶກສາຜູ້ທີ່ໄດ້ຮັບທຶນ ຕ້ອງໄດ້ຮັບການອະນຸມັດຈາກໜ່ວຍງານ ຫຼື ສະຖານທູດຫວຽດນາມ ປະຈຳບັນດາປະເທດທີ່ນັກສຶກສາສະໝັກ.

2. ເປົ້າໝາຍ ແລະ ວິຊາຮຽນຂອງຜູ້ທີ່ໄດ້ຮັບທຶນການສຶກສາ(ທຶນ 100)

2.1. ເປົ້າໝາຍ: ໃຫ້ທຶນການສຶກສາຈຳນວນ 15 ທຶນ ຕາມຈຸດປະສົງທີ່ໄດ້ກ່າວມາຂໍ້ 1.1

2.2. ສາຂາວິຊາຮຽນສຳລັບຜູ້ທີ່ໄດ້ຮັບທຶນການສຶກສາ (ທຶນ 100%)

| ລ/ດ | ວິຊາຮຽນ | ລະຫັດ | ປະເທດທີ່ລົງທະບຽນຮຽນ | ຈຳນວນ |
|---|---|---|---|---|
| 1 | ເຕັກໂນໂລຊີຊີວະພາບ | 7420201 | ກຳປູເຈ່ຍ<br>ລາວ<br>ອິນໂດເນເຊຍ | 15 ທຶນມີ:<br>ກຳປູເຈຍ 10<br>ລາວ 03<br>ອິນໂດເນເຊຍ 02 |
| 2 | ວິທະຍາສາດການປູກພືດ | 7620110 | | |
| 3 | ລ້ຽງສັດ | 7620105 | | |
| 4 | ເຕັກໂນໂລຊີສິ່ງແວດລ້ອມ | 7510406 | | |
| 5 | ຄຸ້ມຄອງຊັບພະຍາກອນສິ່ງແວດລ້ອມ | 7850101 | | |
| 6 | ພາສາ ແລະ ວັດທະນະທຳຫວຽດນາມ | 7220101 | | |

2.3. ຜູ້ໃຫ້ທຶນການສຶກສາຮັບຜິດຊອບ

- ຮັບຜິດຊອບຄ່າຮຽນ 100% ຕະຫຼອດໄລຍະເວລາຮຽນຈົນຈົບ ( ລວມທັງຄ່າຮຽນກຽມພາສາຫວຽດນາມ ຕາມແຈ້ງການ );
- ຮັບຜິດຊອບເບັ້ຍລ້ຽງ 1.000.000 ດົງ/ເດືອນ;
- ຮັບຜິດຊອບຄ່າປະກັນໄພສຸຂະພາບ ຕາມລະບຽບກົດໝາຍຂອງຫວຽດນາມ;
- ຮັບຜິດຊອບຫໍພັກ ( ບໍ່ລວມຄ່າໄຟຟ້າ ແລະ ຄ່ານໍ້າ );
- ຄ່າໃຊ້ຈ່າຍໃນການທັດສະນະສຶກສາ ແລະ ຄ່າໃຊ້ຈ່າຍອື່ນໆສຳລັບນັກສຶກສາຕ່າງປະເທດແມ່ນກຸ້ມຕົນເອງ.

3. ບັນດາວິຊາຮຽນຕາມຫຼັກສູດປົກກະຕິ (ທຶນສ່ວນຕົວ)

ນອກຈາກ 6 ສາຂາວິຊາຮຽນທີ່ກ່າວມາຂໍ້ 2.2 ຂ້າງເທິງນັ້ນແລ້ວ, ຜູ້ສະໝັກສາມາດມາຮຽນດ້ວຍທຶນສ່ວນຕົວຕາມລາຍວິຊາດັ່ງລຸ່ມນີ້:

| ລ/ດ | ສາຂາ-ວິຊາສະເພາະ | ລະຫັດ | ໝາຍເຫດ |
|---|---|---|---|
| 1 | ກົດໝາຍ | 7380101 | |
| 2 | ພາສາອັງກິດ | 7220201 | |
| 3 | ການບັນຊີ | 7340301 | |
| 4 | ການເງິນ-ການທະນາຄານ | 7340201 | |
| 5 | ບໍລິຫານທຸລະກິດ | 7340101 | |
| 6 | ເຕັກໂນໂລຊີຂໍ້ມູນຂ່າວສານ | 7480201 | |
| 7 | ເຕັກໂນໂລຊີວິສະວະກຳການກໍ່ສ້າງ | 7510103 | |
| 8 | ເຕັກໂນໂລຊີອາຫານ | 7540101 | |
| 9 | ການລ້ຽງສັດນໍ້າ | 7620301 | |
| 10 | ເຕັກໂນໂລຊີວິສະວະກຳລົດຍົນ | 7510205 | |
| 11 | ການທ່ອງທ່ຽວ | 7810101 | |
| 12 | ວິສະວະກຳການຄວບຄຸມ ແລະ ລະບົບອັດຕະໂນມັດ | 7520216 | |

❖ ຄ່າຮຽນ ແລະ ຄ່າຄອງຊີບ:

- ຄ່າຮຽນ 1 ປີຮຽນ (ລວມ 3 ພາກຮຽນ) ປະມານ: 15ລ້ານດົງ ຫາ 18ລ້ານດົງ.

- ຄ່າຄອງຊີບ ປະມານ: 2-3 ລ້ານດົງ/ ເດືອນ

4. ເງື່ອນໄຂການສະໝັກທຶນການສຶກສາປະກອບມີ:

- ແບບຟອມສະໝັກ ( ຕາມແບບຟອມຂອງທາງໂຮງຮຽນກຳນົດໃຫ້ );
- ສຳເນົາໃບຢັ້ງຢືນການເກີດ (ຢັ້ງຢືນ ແລະ ຈໍ້າກາຈາກໜ່ວຍງານທີ່ໄດ້ຮັບອານຸຍາດ)
- ສຳເນົາໃບປະກາດຈົບຊັ້ນມັດທະຍົມ, ໃບຄະແນນມໍ 5-6-7 ທີ່ໄດ້ຮັບການຮັບຮອງ (ແປເປັນພາສາຫວຽດນາມ ຫຼື ພາສາອັງກິດ) ຫຼື ໃບຢັ້ງຢືນການຈົບຊົ່ວຄາວທີ່ໄດ້ຮັບການຮັບຮອງ (ແປເປັນພາສາຫວຽດນາມ ຫຼື ພາສາອັງກິດ)
- ສຳເນົາໃບຢັ້ງຢືນການຮຽນພາສາຫວຽດ ຫຼື ພາສາຕ່າງປະເທດ (ຖ້າມີ)
- ໃບຢັ້ງຢືນກວດສຸຂະພາບ (ບໍ່ເກີນ 6 ເດືອນ ເປັນພາສາຫວຽດ ຫຼື ພາສາອັງກິດ)

5. ເວລາ ແລະ ສະຖານທີ່ສົ່ງຄຳຮ້ອງລົງທະບຽນຮຽນ

❖ **ໄລຍະເວລາ**: ການເຂົ້າຮຽນແມ່ນອີງໃສ່ການລົງທະບຽນຂອງຜູ້ສະໝັກຫວຽດນາມ ແລະ ໄດ້ຮັບການຢັ້ງຢືນເຂົ້າຮຽນກ່ອນວັນທີ **11/11/2022** ຜ່ານລະບົບການລົງທະບຽນທາງອອນລາຍ ແລະ ອີເມວຂອງມະຫາວິທະຍາໄລກຽນຢາງ.

❖ **ລາຍລະອຽດຂໍ້ມູນຕິດຕໍ່:**

- ມະຫາວິທະຍາໄລກຽນຢາງ, ເລກທີ 320A, ທະໜົນຫຼວງແຫ່ງຊາດ 61, ເທດສະບານມົງລອງ, ເມືອງເຈົາແທ່ງ, ແຂວງກຽນຢາງ

ໂທ : 02973628777 /ອີເມວ: qldt@vnkgu.edu.vn

- ຫຼື ຕິດຕໍ່ທີ່ຫ້ອງການພົວພັນຕ່າງປະເທດ ແລະ ຫ້ອງການວິທະຍາສາ ແລະ ເຕັກໂນໂລຊີ ມະຫາວິທະຍາໄລກຽນຢາງ

ໂທ: 02973628111 /ອີເມວ: htkhcn@vnkgu.edu.vn

**ຜູ້ອຳນວຍການໂຮງຮຽນ**

Nguyễn Tuấn Khanh